ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ເຈົ້າແຂວງ

ເລກທີ:..871.../ຈຂ.ບກ
ບໍ່ແກ້ວ, ວັນທີ:..30 ຕຸລາ..2017

# ຄຳສັ່ງ
# ຂອງເຈົ້າແຂວງ ແຂວງບໍ່ແກ້ວ
# ວ່າດ້ວຍ ການແກ້ໄຂການນຳເຂົ້ານ້ຳມັນເຊື້ອໄຟທີ່ບໍ່ຖືກຕ້ອງຕາມກົດໝາຍ.

ເຖິງ: ບັນດາທ່ານ ຫົວໜ້າພະແນກການ, ບັນດາທ່ານເຈົ້າເມືອງ, ຄະນະສະເພາະກິດທີ່ໄດ້ຮັບການການແຕ່ງຕັ້ງ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງພາຍໃນແຂວງບໍ່ແກ້ວ.

- ອີງຕາມ: ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ68/ສພຊ, ລົງວັນທີ14/12/2015
- ອີງຕາມ: ບົດບັນທຶກກອງປະຊຸມປຶກສາຫາລືວິທີສະກັດກັ້ນ ແລະ ແກ້ໄຂບັນຫາການລັກລອບນຳເຂົ້ານ້ຳມັນເຊື້ອໄຟຢູ່ຕາມລຳແມ່ນ້ຳຂອງ ລົງວັນທີ 22 ເດືອນ 8 ປີ 2017.

ໃນໄລຍະຜ່ານມາ ຜູ້ປະກອບການທຸລະກິດຂົນສົ່ງ ແລະ ຂາຍນ້ຳມັນເຊື້ອໄຟຢູ່ພາຍໃນແຂວງບໍ່ແກ້ວ ສ່ວນໃຫຍ່ແມ່ນໄດ້ດຳເນີນທຸລະກິດຖືກຕ້ອງຕາມລະບຽບກົດໝາຍ ແລະ ໄດ້ມີການປະກອບສ່ວນເສຍພັນທະເຂົ້າງົບປະມານລັດຢ່າງຕັ້ງໜ້າ ເຮັດໃຫ້ເສດຖະກິດຂອງແຂວງ ມີການຂະຫຍາຍຕົວຂຶ້ນເປັນກ້າວໆ, ແຕ່ເຖິງຢ່າງໃດກໍ່ຕາມ ເຫັນວ່າຍັງມີຜູ້ປະກອບການດຳເນີນທຸລະກິດຂົນສົ່ງ ແລະ ຂາຍນ້ຳມັນເຊື້ອໄຟດ້ວຍເຮືອ-ແພ ແລະ ໂປະຂາຍນ້ຳມັນ ຢູ່ຕາມແມ່ນ້ຳຂອງ ຂອງປະຊາຊົນ, ຜູ້ດຳເນີນທຸລະກິດຈຳນວນໜຶ່ງ ຍັງມີການລັກລອບນຳເຂົ້ານ້ຳມັນເຊື້ອໄຟ ທີ່ບໍ່ຖືກຕ້ອງຕາມກົດໝາຍ ເປັນຈຳນວນຫຼວງຫຼາຍ, ມີການຫຼົບຫຼີກການປະຕິບັດພັນທະພາສີອາກອນ, ໄດ້ສ້າງຄວາມຫຍຸ້ງຍາກສັບສົນໃຫ້ແກ່ການຄຸ້ມຄອງ ແລະ ມີຜົນກະທົບຕໍ່ກັບການເກັບລາຍຮັບເຂົ້າງົບປະມານຂອງລັດເປັນຈຳນວນຫຼາຍ. ສະນັ້ນ, ເພື່ອເຮັດໃຫ້ການນຳເຂົ້ານ້ຳມັນເຊື້ອໄຟຢູ່ແຂວງບໍ່ແກ້ວຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ, ທັງຮັບປະກັນຄວາມປອດໄພຕໍ່ກັບຜູ້ປະກອບການຂົນສົ່ງນ້ຳມັນເຊື້ອໄຟ.

## ເຈົ້າແຂວງ ແຂວງບໍ່ແກ້ວ ອອກຄຳສັ່ງ:

1. ໃຫ້ໂຈະ ແລະ ຖອນໃບອະນຸຍາດດຳເນີນທຸລະກິດ ທຸກປະເພດຂອງເຮືອຂົນສົ່ງນ້ຳມັນເຊື້ອໄຟທຸກໆລຳ, ທຸກປະເພດ ທີ່ຂະແໜງການກ່ຽວຂ້ອງ ໄດ້ອອກໃບອະນຸຍາດໃຫ້ດຳເນີນທຸລະກິດ ໃນການຂົນສົ່ງນ້ຳມັນເຊື້ອໄຟຊົ່ວຄາວ ຈົນກວ່າຈະໄດ້ຮັບການປັບປຸງໃຫ້ເຂົ້າສູ່ລະບຽບກົດໝາຍ.
2. ຫ້າມຜູ້ປະກອບການ ຕິດຕັ້ງເຄື່ອງຈັກໃສ່ແພ, ໂປະ ຂາຍນ້ຳມັນທີ່ສາມາດແລ່ນໄດ້ຄືເຮືອຢ່າງເດັດຂາດ, ໃຫ້ແຍກອອກລະຫວ່າງ ເຮືອຂົນສົ່ງນ້ຳມັນ ກັບ ແພບໍລິການຂາຍຍ່ອຍນ້ຳມັນເຊື້ອໄຟ.

3. ໃຫ້ບໍລິສັດນຳເຂົ້ານ້ຳມັນ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງເປັນຜູ້ສົ່ງນ້ຳມັນເຊື້ອໄຟໃຫ້ເຮືອແພ, ໂປະຂາຍຍ່ອຍນ້ຳມັນຢູ່ແຄມຂອງ ເພື່ອບໍ່ໃຫ້ຜູ້ປະກອບການຂາຍຍ່ອຍນ້ຳມັນດັ່ງກ່າວ ລັກລອບນຳເຂົ້ານ້ຳມັນຢ່າງເດັດຂາດ.

4. ຫ້າມຜູ້ປະກອບການຂາຍນ້ຳມັນຕັ້ງເຮືອແພ, ໂປະຂາຍນ້ຳມັນຫ່າງຈາກບໍລິເວັນດ່ານພາສີ 100 ແມັດ, ຖ້າຜູ້ປະກອບການ ຫຼື ປະຊາຊົນຜູ້ໃດ ຫາກບໍ່ປະຕິບັດ ຫຼື ຝ່າຝືນ ຕາມທີ່ເຈົ້າໜ້າທີ່ກຳນົດໄວ້ແມ່ນໃຫ້ຮື້ຖອນ ແລະ ຍຸບເລີກເຮືອແພ, ໂປະຂາຍນ້ຳມັນດັ່ງກ່າວ ໂດຍບໍ່ມີເງື່ອນໄຂ.

5. ເຮືອຂົນສົ່ງສິນຄ້າທຸກໆລຳ, ທຸກປະເພດກ່ອນຈະເຂົ້າ-ອອກໄປ ຕ່າງສິນຄ້າ ຢູ່ຝັ່ງໄທຕ້ອງໄດ້ຮັບການອະນຸຍາດຈາກເຈົ້າໜ້າທີ່ ຕມ ແລະ ເຈົ້າໜ້າທີ່ພາສີປະຈຳຢູ່ດ່ານສາກ່ອນ ຈຶ່ງສາມາດໄປຕ່າງສິນຄ້າໄດ້.

6. ບໍລິສັດ ແລະ ຜູ້ປະກອບການທີ່ໄດ້ຮັບອະນຸຍາດຖືກຕ້ອງ ທີ່ຈະນຳນ້ຳມັນເຊື້ອໄຟເຂົ້າມາຈຳໜ່າຍພາຍໃນແຂວງບໍ່ແກ້ວ ແລະ ຜ່ານແຂວງບໍ່ແກ້ວ ຕ້ອງນຳເຂົ້າຜ່ານດ່ານສາກົນຂົວມິດຕະພາບ 4 ລາວ-ໄທ ພຽງບ່ອນດຽວເທົ່ານັ້ນ, ກໍລະນີຫາກພົບເຫັນການນຳເຂົ້າຢູ່ສະຖານທີ່ອື່ນໆ, ຖືວ່າເປັນການນຳເຂົ້ານ້ຳມັນເຊື້ອໄຟທີ່ບໍ່ຖືກຕ້ອງຕາມກົດໝາຍ, ມອບໃຫ້ເຈົ້າໜ້າທີ່ຕິດຕາມກວດກາ ຖ້າພົບເຫັນໃຫ້ດຳເນີນຄະດີຕາມລະບຽບກົດໝາຍຂອງສ ປ ປ ລາວ ຢ່າງເຂັ້ມງວດ.

7. ມອບໃຫ້ ຄະນະສະເພາະກິດທີ່ໄດ້ຮັບການແຕ່ງຕັ້ງ ດຳເນີນການກວດກາເຮືອຂົນສົ່ງສິນຄ້າທຸກປະເພດ ໃນການດຳເນີນທຸລະກິດ ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍແລ້ວບໍ່, ຖ້າບໍ່ຖືກຕ້ອງກໍຕ້ອງໄດ້ມີທິດແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍ.

8. ເຫັນດີ ໃຫ້ພະແນກການທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຈັດຕັ້ງສະມາຄົມເຮືອຂົນສົ່ງນ້ຳມັນເຊື້ອໄຟຂຶ້ນ ໂດຍກຳນົດເອົາຈຸດທີ່ຕັ້ງຢູ່ສະຖານທີ່ທ່າເຮືອບ້ານມອມ ເພື່ອສະດວກໃນການຄຸ້ມຄອງ ແລະ ຫັນເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງຕາມລະບຽບການ.

9. ມອບໃຫ້ພະແນກການ, ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ, ຈັດຕັ້ງການລົງໂຄສະນາເຜີຍແຜ່, ຜັນຂະຫຍາຍຄຳສັ່ງສະບັບນີ້ໃຫ້ລະອຽດ, ທົ່ວເຖິງທຸກເປົ້າໝາຍ ແລະ ເປັນເຈົ້າການຈັດຕັ້ງປະຕິບັດຕາມຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

10. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຕາມຄຳສັ່ງສະບັບນີ້ໄດ້ຮັບຜົນດີ, ເຫັນດີໃຫ້ແຕ່ງຕັ້ງຄະນະສະເພາະກິດຂອງແຂວງຂຶ້ນ ເພື່ອເປັນເຈົ້າການຕິດຕາມ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດຕົວຈິງ.

11. **ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.**

ເຈົ້າແຂວງ ແຂວງບໍ່ແກ້ວ.

ປອ ຄຳພັນ ເຜີຍຍະວົງ

**✱ບ່ອນສົ່ງ:**

- ເຈົ້າແຂວງ, ຮອງເຈົ້າແຂວງ.
- ພະແນກການຄ້າ, ພະແນກອາກອນ.
- ພະແນກ ຍທຂ, ຄະນະຫ້ອງວ່າການແຂວງ.
- ພາສີດ່ານຂົວມິດຕະພາບ 4 , ກອງກວດກາພາສີ.
- ເຈົ້າເມືອງເມືອງຕົ້ນເຜິ້ງ, ສຳເນົາ.

ສົ່ງຖອນລັດ 2